**ແຈ້ງການກ່ຽວກັບການປັບປຸງຂອງ ເງື່ອນໄຂການທະນາຄານທົ່ວໄປ ແລະ ຂໍ້ກຳນົດວ່າດ້ວຍສິນເຊື່ອເພື່ອການຄ້າ ຂອງ ເອເອັນແຊັດ**

ເຖິງ ລູກຄ້າ ເອເອັນແຊັດ ປະຈຳ ສປປ ລາວ ທຸກທ່ານ

ທີ່ ທະນາຄານ ເອເອັນແຊັດ, ພວກເຮົາເອົາໃຈໃສ່ໃນການປັບປຸງ ແລະ ເສີມສ້າງປະສົບການທີ່ດີຂຶ້ນໃຫ້ແກ່ລູກຄ້າຢ່າງສະໝໍ່າສະເໝີ. ສະນັ້ນ ແລ້ວ, ພວກເຮົາມີຄວາມຍິນດີທີ່ຈະແຈ້ງໃຫ້ທ່ານຊາບວ່າ ທາງທະນາຄານໄດ້ມີການປັບປຸງ ເງື່ອນໄຂການທະນາຄານທົ່ວໄປ (ຕາມ ຕາຕະລາງທີ່ຄັດຕິດ) ແລະ ຂໍ້ກຳນົດວ່າດ້ວຍສິນເຊື່ອເພື່ອການຄ້າ ຂອງ ເອເອັນແຊັດ. ເພື່ອເຮັດໃຫ້ໝັ້ນວ່າການບໍລິການທີ່ທ່ານໄດ້ຮັບຈາກ ທະນາຄານຈະບໍ່ມີການຕິດຂັດ, ເງື່ອນໄຂການທະນາຄານທົ່ວໄປ ແລະ ຂໍ້ກຳນົດວ່າດ້ວຍສິນເຊື່ອເພື່ອການຄ້າ ຂອງ ເອເອັນແຊັດ ສະບັບ ປັບປຸງດັ່ງກ່າວຈະຖືກນຳໃຊ້ ເລີ່ມຈາກ ວັນທີ 8 ມີນາ 2019 ເປັນຕົ້ນໄປ. ທ່ານສາມາດເຂົ້າເຖິງ ເງື່ອນໄຂການທະນາຄານທົ່ວໄປ ແລະ ຂໍ້ ກຳນົດວ່າດ້ວຍສິນເຊື່ອເພື່ອການຄ້າ ຂອງ ເອເອັນແຊັດ ສະບັບປັບປຸງໄດ້ທີ່: https://institutional.anz.com/markets/laos/en/forms

ຖ້າຫາກທ່ານຕ້ອງການ ສຳເນົາ ເງື່ອນໄຂການທະນາຄານທົ່ວໄປ ແລະ ຂໍ້ກຳນົດວ່າດ້ວຍສິນເຊື່ອເພື່ອການຄ້າ ຂອງ ເອເອັນແຊັດ ສະບັບ ປັບປຸງ, ຫຼື ຖ້າຫາກທ່ານມີຄຳຖາມທີ່ກ່ຽວຂ້ອງກັບແຈ້ງການນີ້, ທ່ານສາມາດຕິດຕໍ່ຫາ ໜ່ວຍບໍລິການລູກຄ້ານິຕິບຸກຄົນ ຜ່ານເບີໂທລະສັບ +856 21 222722 ຫຼື ອີເມວຫາພວກເຮົາໄດ້ທາງ SupportCenter.ANZBusiness@anz.com ຫຼື ຕິດຕໍ່ຫາຜູ້ຈັດການ ສາຍພົວພັນຂອງທ່ານ.

ພວກເຮົາຂໍຂອບໃຈທີ່ ທ່ານເລືອກໃຊ້ບໍລິການທະນາຄານ ກັບ ເອເອັນແຊັດ ແລະ ເຂົ້າໃຈເຖິງການປັບປຸງນີ້.

ດ້ວຍຄວາມນັບຖື

ເອເອັນແຊັດລາວ